# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການຕອນໄກ່

( ສະບັບທົດລອງ )



ຂຽນໂດຍ: ນາງ ເບັ່ຍຢ່າງ

ຂໍ້ມູນຈາກ: ບ້ານສົມສະໄໝ ເມືອງ ໄຊທານີ ນະຄອນຫລວງ

ປີ 2006

PDF created with pdfFactory Pro trial version www.pdffactory.com

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# ການຕອນໄກ່

ຮີບໂຮມ ແລະຈັດໜ້າໂດຍ : ທ້າວ ຄຳຫຼ້າ ພອນມະນີວົງ

ແຕ້ມໂດຍ: ທ້າວ ຄຳຫຼ້າ ພອນມະນີວົງ

ຜູ້ຮຽບຮຽງ : ອ.ຈ. ໂພໄຊ ຈັນທະວົງສາ

ອ.ຈ ເກດມະນີ ບັນດາສັກ

ອ.ຈ ຄຳໄຫວ

ອ.ຈ ລັງ ແສງດາລາ

ອ. ຈ ທອງຂັນ

ເຈົ້າຂອງ : ພະແນກສຶກສານະຄອນຫລວງວຽງຈັນ ແລະ ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ ໄດ້ມາຈາກການຂຽນຂອງຊາວບ້ານແລະ ອາສາສະໝັກຊຶ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາແລະພະແນກສຶກສານະຄອນຄອນຫຼວງວຽງຈັນ.

ປື້ມຫົວນ້ອຍຫົວນີ້ ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະ ສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ1 ປໍ 2 ແລະ ບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫັວງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸ່ງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາ

ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ ອາຊີບຫຼັກຂອງພໍ່ແມ່ປະຊາຊົນເຮົາໃນເມື່ອກ່ອນແຕ່ອະດີດເຖິງປັດຈຸບັນແມ່ນຍຶດຖືເອົາວຽກງານການກະສິກຳເປັນຫຼັກໂດຍການປູກຝັງລ້ຽງສັດ.ເຊິ່ງໃນນັ້ນການລ້ຽງໄກ່ກໍແມ່ນອາຊີບໜຶ່ງທີ່ສຳຄັນ ແລະຄຽງຄູ່ກັບຊີວິດການເປັນຢູ່ຂອງມະນຸດເຮົາມາແຕ່ດຶກດຳບັນມາເຖິງປະຈຸບັນຊຶ່ງການລ້ຽງໄກ່ມີຄວາມສຳຄັນສາມາດຕອບສະໜອງເປັນສະບຽງອາຫານ, ລ້ຽງເພື່ອຄວາມສວຍງາມຖ້າເຮົາລ້ຽງຫຼາຍກໍສາມາດຂາຍເພື່ອສ້າງລາຍໄດ້ໃຫ້ແກ່ຄອບຄົວ, ສາມາດສ້າງເສດຖະກິດຄອບຄົວໃຫ້ດີຂຶ້ນ. ນອກຈາກການບໍລິໂພກເປັນອາຫານແລ້ວຍັງສາມາດນຳໃຊ້ເປັນປະໂຫຍດໃນວຽກງານການປູກ ຝັງ ຄືໄດ້ຂີ້ໄກ່ໃສ່ຜັກແລະເຄື່ອງປູກອື່ນໆ.

ການລ້ຽງໄກ່ຂອງປະຊາຊົນເຮົາໃນເມື່ອກ່ອນແມ່ນລ້ຽງຕາມມີຕາມເກີດປະປ່ອຍລະເລີຍ, ລ້ຽງເພື່ອແກ້ໄຂຊີວິດປະຈຳວັນໂດຍເພິ່ງທຳມະຊາດບໍ່ມີການນຳໃຊ້ເຕັກນິກວິທະຍາສາດ.

PDF created with pdfFactory Pro trial version www.pdffactory.com

# ອຸປະກອນສຳລັບການຕອນໄກ່

ມີດແຖ



ເຂັມ



ດ້າຍ



PDF created with pdfFactory Pro trial version www.pdffactory.com

## ວິທີການເຮັດ

ເຮົາຕ້ອງເລືອກເອົາໄກ່ໂຕຜູ້ທີ່ກຳລັງເປັນບ່າວ ກຳລັງຂັນ, ຫຼືກຂົນໄກ່ອອກຢູ່ທາງກົ້ນລົງໄປປະມານ 2ນີ້ວມືແລ້ວປາດກົ້ນໄກ່ຕາມລວງຕັ້ງ ພໍນີ້ວມືເຂົ້າໄດ້ແລະກໍໃຊ້ນີ້ວມືແຍເຂົ້າໄປທາງໃນເພື່ອດຶງເອົາໝາກໄຂ່(ຫຳໄກ່)ນັ້ນອອກມາຕ້ອງດຶງອອກມາ ໝົດທັງ 2 ໜ່ວຍ. ຫຼັງຈາກແລ້ວເຮົາກໍເອົາເຂັມກັບດ້າຍມາຫຍິບກົ້ນຂອງໄກ່ທີ່ປາດນັ້ນຄືນຄືເກົ່າ.



## ຫຼັກການທີ່ສຳຄັນ

- ການຕອນໄກ່ແມ່ນເລືອກເອົາໄກ່ຊ້ວງທີ່ມີອາຍຸໄດ້ 3 ເດືອນ,ຖ້າໄກ່ອ່ອນກົ່ວນັ້ນຈະເຮັດໃຫ້ໄກ່ຕາຍ,ແຕ່ຖ່າໄກ່ແກ່ກົ່ວນັ້ນຈະເຮັດໃຫ້ການຂະຫຍາຍຕົວຊ້າລົງ ແລະເຮັດໃຫ້ໄກ່ບໍ່ມີນໍ້າໜັກຂາຍບໍ່ໄດ້ລາຄາ

PDF created with pdfFactory Pro trial version www.pdffactory.com

## ຄຸນປະໂຫຍດຂອງໄກ່ຕອນ

ແມ່ນລ້ຽງເພື່ອຂ້າກິນໃນຄອບຄົວ.ໄກ່ຕອນນີ້ມັນຕຸ້ຍດີແລະ ໃຫ້ຊີ້ນຫຼາຍບໍ່ຕາຍຮ່າ, ລ້ຽງເພື່ອເອົາໄປຕ້ອນໝູ່ຄູ່ຫຼືພີ່ນ້ອງກໍໄດ້.

## ກາບ: ລ້ຽງໄກ່ຕອນ

| | |
|---|---|
| ຊາວບ້ານຂ້ອຍ | ມັກລ້ຽງໄກ່ຕອນ |
| ໜ້າອອນຊອນ | ໄກ່ຕອນເປັນຮ້ອຍ |
| ພວກໝູ່ຂ້ອຍ | ເກືອເຂົ້າສາລີ |
| ຕຸ້ຍອີຫຼີ | ນໍ້າໜັກເກີນຄາດ |
| ບໍ່ປະໝາດ | ເກືອເຊົ້າເກືອແລງ |
| ເປັນຕາແພງ | ຕຸ້ຍໜັກຕຸ້ຍໜາ |
| ຂ້ອຍຈຶ່ງພາ | ເພື່ອນຝຸງມາເບິ່ງ |
| ໃຜໄດ້ເບິ່ງ | ບອກວ່າຄັກຫຼາຍ |

ແຕ່ງໂດຍ:ເປູ້ຍຢ່າງ

PDF created with pdfFactory Pro trial version www.pdffactory.com

## ເຊື້ອງ: ງານແທ້

ເອີາມາເຮົາມາ　　　ມາເບິງໄກ່ຕອນ
ເປັນຕາຊະອອນ　　　ທັງຕຸ້ຍທັງງາມ
ໃຜເຫັນກໍຖາມ　　　ໄກ່ງານແທ້ນໍ
ຂ້ອຍເລີຍບອກຕໍ່　　　ນີ້ຄືໄກ່ຕອນ

## ເພງ: ເປັນຕາສະອອນ

ຢູ່ບ້ານເຮົາ　　　ນັ້ນມີໄກ່ຕອນ
ເປັນຕາຊະອອນ　　　ທັງຕຸ້ຍທັງພີ
ໃຜໄດ້ກິນ　　　ກໍບອກວ່າແຊບດີ ( ຊ້ຳ )
ມັນແຊບອີ່ຫຼີ　　　ນໍໄກ່ຕອນບ້ານເຮົາ

ແຕ່ງໂດຍ ທ ຄຳຫລ້າພອນມະນີວົງ

PDF created with pdfFactory Pro trial version www.pdffactory.com

# ຮູບ ແລະປະຫວັດຂອງຜູ້ຂຽນ

ຊື່ ນາງ ເບຍຢ່າງ

.ອາຍຸ.33 ປີ.

ອາຊີບ.ຮດສ່ວນ

## ເຫດຜົນຂອງການຂຽນຫົວຂໍ້ນີ້:

ຍ້ອນວ່າການລ້ຽງໄກ່ຕອນເປັນອາຊີບໜຶ່ງທີ່ສຳຄັນຂອງຄົນລາວໂດຍສະເພາະແມ່ນເຜົ່າມົ້ງພວກເຮົາທີ່ໄດ້ສືບທອດກັນມາແຕ່ປູ່ຍ່າຕາຍາຍແລະພໍ່ແມ່ຂອງພວກເຮົາເພາະໄກ່ຕອນເປັນໄກ່ທີ່ຕຸ້ຍພີດີງາມ ແລະມັກລ້ຽງເພື່ອເບິ່ງ ແລະໄດ້ຂ້າກິນໃນຄອບຄົວຫຼືເວລາມີໝູ່ຄູ່ພີນ້ອງມາຢາມກໍເອົາເປັນຂອງຝາກຂອງຕ້ອນ,ຖ້າລ້ຽງຫຼາຍກໍສາມາດຂາຍເພື່ອນຳເອົາເງິນເຂົ້າສູ່ຄອບຄົວ.

PDF created with pdfFactory Pro trial version www.pdffactory.com